# ບົດບັນທຶກ ກ່ຽວກັບ ຂໍ້ກໍານົດເງື່ອນໄຂ ການກວດກາສັດຕູພືດ ສາລີ ກ່ອນການນໍາເຂົ້າ ສປ ຈີນ

ລະຫວ່າງ

ກະຊວງກະສິກໍາ ແລະ ປ່າໄມ້ ແຫ່ງ ສປປ ລາວ

ແລະ

ອົງການບໍລິຫານການຄຸ້ມຄອງ, ກວດກາຄຸນນະພາບ ແລະ ການກັກກັນພືດ ແລະ ສັດ ແຫ່ງ ສປ ຈີນ

ເພື່ອອໍານວຍຄວາມສະດວກ ການນໍາເຂົ້າສາລີ ຈາກ ສປປ ລາວ ໄປ ສປ ຈີນ ໃຫ້ມີຄວາມປອດໄພ ທາງດ້ານນິເວດວິທະຍາການຜະລິດກະສິກໍາໃນ ສປ ຈີນ, ໂດຍ ອີງໃສ່ຜົນການວິໄຈຄວາມສ່ຽງສັດຕູພືດຂອງອົງການບໍລິຫານ ການຄຸ້ມຄອງ, ກວດກາຄຸນນະພາບ ແລະ ກັກກັນພືດ ແລະ ສັດສປ ຈີນ (ຕໍ່ໄປ ເອີ້ນວ່າ ຝ່າຍຈີນ) ແລະ ກະຊວງກະສິກໍາ ແລະ ປ່າໄມ້ ສປປ ລາວ (ຕໍ່ໄປ ເອີ້ນວ່າ ຝ່າຍລາວ), ຜ່ານການປຶກສາຫາລື ຮ່ວມກັນກ່ຽວກັບຂໍ້ກໍານົດເງື່ອນໄຂການ ກວດກາສັດຕູພືດສາລີ ກ່ອນການນໍາເຂົ້າ ສປ ຈີນ ທັງສອງຝ່າຍໄດ້ຕົກລົງເປັນເອກະພາບປະຕິບັດຕາມເນື້ອໃນ ດັ່ງລຸ່ມນີ້.

ບົດບັນທຶກສະບັບນີ້ ກ່ຽວຂ້ອງກັບການກັກກັນພືດເທົ່ານັ້ນ, ສາລີຂອງສປປ ລາວ ຕ້ອງສອດຄ່ອງກັບມາດຕະຖານຄວາມປອດໄພດ້ານອາຫານຂອງ ສປ ຈີນ. ມາດຕະຖານ ແລະ ຂໍ້ກໍານົດດ້ານສຸຂານາໄມສັດ ແມ່ນ ບໍ່ໄດ້ຢູ່ ໃນເນື້ອໃນ ຂອງ ບົດບັນທຶກ ສະບັບນີ້.

## ມາດຕາ 1

ສາລີຂອງ ສປປ ລາວ ທີ່ຈະນໍາເຂົ້າ ສປ ຈີນ ຕ້ອງຖືກຕ້ອງຕາມເງື່ອນໄຂຂໍ້ກໍານົດການກັກກັນພືດ ຂອງ ສປ ຈີນ, ບໍ່ສາມາດນໍາເອົາສັດຕູພືດ ທີ່ຝ່າຍຈີນ ໄດ້ກໍານົດໄວ້ (ເບິ່ງເອກກະສານຊ້ອນທ້າຍ) ແລະ ສັດຕູພືດ ຊະນິດ ອື່ນ ເຂົ້າ ສປ ຈີນ, ບໍ່ສາມາດເຕີມ ຫຼື ປະປົນກັບ ເມັດພັນພືດຊະນິດອື່ນ ຫຼື ສິ່ງເຈືອປົນອື່ນ ໆ.

## ມາດຕາ 2

ບໍລິສັດທີ່ຈະສົ່ງອອກສາລີ, ຊຶ່ງມີການປຸງແຕ່ງ, ສາງເກັບມ້ຽນ ແລະ ໂຮງອົບຕ້ອງໄດ້ຈົດທະບຽນຢູ່ ສປປ ລາວ. ຝ່າຍລາວຕ້ອງດໍາເນີນການກວດກາບໍລິສັດເຫຼົ່ານີ້ ແລະ ສົ່ງລາຍຊື່ຂອງ

ບໍລິສັດທີ່ໄດ້ຈົດທະບຽນໃຫ້ຝ່າຍຈີນກ່ອນ. ການຈົດທະບຽນຂອງບໍລິສັດນັ້ນ ຕ້ອງເປັນໄປຕາມເງື່ອນໄຂ ຂໍ້ກໍານົດການກັກກັນພືດ.

## ມາດຕາ 3

ຝ່າຍລາວ ຕ້ອງຈັດຕັ້ງຊາວກະສິກອນຜູ້ປູກ, ຜູ້ປຸງແຕ່ງ ແລະ ຜູ້ສົ່ງອອກ ໃຫ້ນໍາໃຊ້ວິທີການຄວບຄຸມສັດຕູພືດແບບປະສົມປະສານ ເພື່ອຫລຸດຜ່ອນການເກີດລະບາດຂອງສັດຕູພືດໃນເຂດການຜະລິດສາລີ. ກ່ອນຂັ້ນຕອນການປຸງແຕ່ງ, ການຂົນສົ່ງຕ້ອງນໍາໃຊ້ວິທີການຄັດຊ່ອນທໍາຄວາມສະອາດ, ຕາກແດດ, ອົບແຫ້ງເພື່ອຫລີກເວັ້ນສາລີຕິກໄໝ້ ຫຼື ມີດິນຕິດປະປົນ, ສິ່ງເສດເຫລືອ ຂອງພືດ, ສິ່ງເຈືອປົນ ອື່ນ ໆ ແລະ ເມັດຫຍ້າ.

## ມາດຕາ 4

ກ່ອນການສົ່ງອອກ, ຝ່າຍລາວ ຕ້ອງໄດ້ດໍາເນີນວິທີການ ກວດກາສັດຕູພືດສາລີ ເພື່ອໃຫ້ແນ່ໃຈວ່າສາລີນັ້ນ ປັດສະຈາກສັດຕູພືດທີ່ຝ່າຍຈີນໄດ້ລະບຸໄວ້ ເພື່ອໃຫ້ຖືກຕ້ອງເໝາະສົມຕາມເງື່ອນໄຂເນື້ອໃນຂອງບົດບັນທຶກສະບັບນີ້ ແລະ ຕ້ອງອອກໃບຢັ້ງຢືນສຸຂານາໄມພືດໃຫ້ໂດຍຂະແໜງການທີ່ກ່ຽວຂ້ອງ. ພ້ອມດຽວກັນນັ້ນ ໃບຢັ້ງຢືນ ຕ້ອງມີເອກະສານ ທີ່ກ່ຽວຂ້ອງ ຄັດຕິດ "ສໍາລັບຊຸດ ສາລີ ທີ່ຈະສົ່ງອອກຕ້ອງຖືກຕາມເງື່ອນໄຂ ຂໍ້ກໍານົດການກັກກັນພືດຂອງ ສປປ ລາວ".

## ມາດຕາ 5

ກ່ອນການນໍາເຂົ້າ ສາລີ, ຜູ້ປະກອບການ ຫຼື ຕົວແທນຜູ້ນໍາເຂົ້າ ຕ້ອງໄດ້ຍື່ນ ເອກະສານທີ່ກ່ຽວຂ້ອງໃຫ້ອົງການບໍລິຫານ ການຄຸ້ມຄອງ, ກວດກາຄຸນນະພາບ ແລະ ການກັກກັນພືດ ແລະ ສັດ ແຫ່ງ ສປ ຈີນ ເພື່ອອອກໃບອະນຸຍາດໃຫ້ນໍາເຂົ້າ ເພື່ອໃຫ້ແນ່ໃຈວ່າສາລີຕ້ອງໄດ້ຖືກນໍາເຂົ້າຕາມຈຸດດ່ານ ບໍ່ຫານ ແລະ ດ່ານອື່ນ ໆໄປຫາໂຮງງານປຸງແຕ່ງ ແລະ ໂຮງອົບທີ່ກໍານົດໄວ້.

ພາຍຫລັງນໍາເຂົ້າສາລີແລ້ວ, ຂັ້ນຕອນການຄ່ຽນຖ່າຍ, ການຂົນສົ່ງ, ການເກັບຮັກສາ, ການປຸງແຕ່ງຕ້ອງຖືກຕ້ອງຕາມເງື່ອນໄຂຂໍ້ກໍານົດ ກ່ຽວກັບການກັກກັນພືດ. ສາລີທີ່ຈະນໍາເຂົ້າຍັງບໍ່ທັນໄດ້ຜ່ານຂະບວນການໃດໆ ແມ່ນບໍ່ອະນຸຍາດໃຫ້ເອົາໄປຈໍາໜ່າຍໃນທ້ອງຕະຫຼາດ. ຫ້າມສາລີທີ່ນໍາເຂົ້ານັ້ນໄປນໍາໃຊ້ ເປັນແນວພັນ ເພື່ອປູກ.

## ມາດຕາ 6

ສາລີ ທີ່ສົ່ງໄປ ສປ ຈີນ ຖ້າເປັນແນວພັນ ທີ່ໄດ້ຕັດຕໍ່ພັນທຸກໍາຈະຕ້ອງໄດ້ຮັບໃບອະນຸຍາດ ເພື່ອຮັບຮອງຄວາມປອດໄພ ການຕັດຕໍ່ພັນທຸກໍາ ແລະ ມີເອກະສານທີ່ກ່ຽວຂ້ອງຈາກ ກະຊວງ ກະສິກໍາ ສປ ຈີນ ກ່ອນ. ອີງການກັກກັນພືດ ຝ່າຍຈີນ ຈະໄດ້ດໍາເນີນການກວດກາຄວາມຖືກຕ້ອງ ທີ່ດ່ານນໍາເຂົ້າ. ການກວດກາແມ່ນກ່ຽວຂ້ອງກັບເອກະສານຢັ້ງຢືນ. ຖ້າເອກະສານຢັ້ງຢືນວ່າບໍ່ແມ່ນ ສາລີທີ່ໄດ້ຕັດຕໍ່ພັນທຸກໍາ ເຈົ້າໜ້າທີ່ຈະໄດ້ສຸ່ມເອົາຕົວຢ່າງ ເພື່ອກວດສອບໃສ່ເປົ້າໝາຍການຕັດຕໍ່ ພັນທຸກໍາຂອງສາລີ.

## ມາດຕາ 7

ເມື່ອ ສາລີຂອງ ລາວ ຮອດຈຸດດ່ານນໍາເຂົ້າ, ຝ່າຍຈີນຈະໄດ້ດໍາເນີນການກວດກາສັດຕູພືດ. ກໍລະນີ ຝ່າຍຈີນ ໄດ້ກວດ ພົບເຫັນສັດຕູພືດກັກກັນ ທີ່ໄດ້ລະບຸໄວ້ນັ້ນ, ຝ່າຍຈີນ ຈະໃຊ້ມາດຕະການ ສົ່ງສາລີກັບ, ເຜົາຖິ້ມ ຫລື ກັກກັນ (ເພື່ອກໍາຈັດສັດຕູພືດ ໃຫ້ມີປະສິດທິຜົນກ່ອນ). ຖ້າກໍລະນີ ເຫດການຮ້າຍແຮງ ຈະໄດ້ລະງັບຊົ່ວຄາວການນໍາເຂົ້າສາລີຂອງບໍລິສັດນໍາເຂົ້າ. ກໍລະນີຮ້າຍແຮງ ກວ່ານັ້ນຈະໄດ້ໂຈະການນໍາເຂົ້າ ສາລີ ຂອງ ສປປ ລາວ ເປັນການຊົ່ວຄາວຈົນກວ່າບັນຫາໄດ້ຮັບ ການແກ້ໄຂ.

ການປະຕິບັດເງື່ອນໄຂ ທີ່ໄດ້ກ່າວມາທັງຫມົດຂ້າງເທິງນັ້ນ, ຝ່າຍຈີນຈະໄດ້ແຈ້ງໃຫ້ຝ່າຍ ລາວຮັບຊາບ ເພື່ອໃຫ້ຝ່າຍລາວກວດກາຫາສາຍເຫດ ແລະ ດໍາເນີນການຕາມວິທີການ ໃຫ້ຖືກຕ້ອງ.

## ມາດຕາ 8

ຝ່າຍລາວ ຕ້ອງລາຍງານສະພາບການເກີດລະບາດຂອງສັດຕູພືດຊະນິດໃໝ່ ແລະ ການນໍາ ໃຊ້ ມາດຕະການຄວບຄຸມໃຫ້ຝ່າຍຈີນຮັບຊາບ. ໃນກໍລະນີຈໍາເປັນ ຝ່າຍຈີນຈະໄດ້ສົ່ງ ຊ່ຽວຊານມາ ສປປ ລາວ ລົງເຂດການຜະລິດສາລີ ຮ່ວມກັບຝ່າຍລາວ ເພື່ອດໍາເນີນ ການສໍາຫຼວດ ສະພາບ ສັດຕູ ພືດ ແລະ ວິທີການ ຄວບ ຄຸມ ຢ່າງຕໍ່ເນື່ອງ ບົນພື້ນຖານ ການຕົກລົງ ເຫັນດີ ຂອງ ຝ່າຍລາວ.

ຝ່າຍຈີນ ຈະອີງໃສ່ສະພາບການເໜັງຕີງ ຂອງສັດຕູພືດສາລີ ຂອງ ລາວ ແລະ ການເກັບກໍາ ສະພາບ ສັດຕູພືດ ທີ່ດ່ານນໍາເຂົ້າ ເພື່ອດໍາເນີນ ການປະເມີນຄວາມສ່ຽງສັດຕູພືດ. ພ້ອມດຽວກັນນັ້ນ ກໍ່ຈະໄດ້ປັບປຸງ ບັນຊີສັດຕູພືດກັກກັນ ແລະ ມາດຕະການ ກັກກັນ ໃຫ້ເໝາະສົມ.

## ມາດຕາ 9

ພາຍຫລັງ ໄດ້ຜ່ານການປຶກສາຫາລືສອງຝ່າຍໄດ້ຕົກລົງເຫັນດີເປັນເອກະພາບກັນ ທາງດ້ານເຕັກນິກ ແລະ ກຳນົດມາດຕະການແກ້ໄຂບັນຫາກັກກັນພືດຮ່ວມກັນ, ເມື່ອເຖິງເວລາອັນຈຳເປັນສອງຝ່າຍຈະໄດ້ຈັດສົ່ງຊ່ຽວຊານ ເພື່ອດຳເນີນການສຳຫຼວດຮ່ວມກັນຄົ້ນຄວ້າ ແລະ ແລກປ່ຽນບົດຮຽນ ຊຶ່ງກັນ ແລະ ກັນ ຢ່າງໂປ່ງໃສ.

ບົດບັນທຶກສະບັບນີ້ ມີຜົນສັກສິດ ນັບແຕ່ ວັນສອງຝ່າຍໄດ້ລົງລາຍເຊັນເປັນຕົ້ນໄປ ແລະ ມີຜົນບັງຄັບໃຊ້ເປັນໄລຍະເວລາ 2 ປີ. ຖ້າວ່າ ກ່ອນ 3 ເດືອນສຸດທ້າຍ ສອງຝ່າຍ ບໍ່ມີ ການສະເໜີປ່ຽນແປງ ຫລື ຂໍ້ຮຽກຮ້ອງ ອື່ນ, ບົດບັນທຶກ ສະບັບນີ້ ຈະນຳໃຊ້ໄດ້ອີກ 2 ປີ ຕໍ່ໄປແບບອັດຕະໂນມັດ.

ບົດບັນທຶກ ສະບັບນີ້ ໄດ້ລົງລາຍເຊັນທີ່ ນະຄອນຫຼວງ ປັກກິ່ງ ໃນວັນທີ 10 ເດືອນ ມັງກອນ ປີ 2012. ໂດຍໃຊ້ສອງພາສາເປັນລາຍຫຼັກອັກສອນ ພາສາລາວ ແລະ ພາສາຈີນ, ທັງສອງພາສາມີຄ່າເທົ່າທຽມກັນ ແລະ ມີເນື້ອໃນຄືກັນທຸກປະການ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ
ກະຊວງກະສິກຳ ແລະ ປ່າໄມ້

ລັດຖະມົນຕີຊ່ວຍວ່າການ



ສາທາລະນະລັດ ປະຊາຊົນ ຈີນ
ອົງການບໍລິຫານ ການຄຸ້ມຄອງ,
ກວດກາຄຸນນະພາບ
ແລະ ກັກກັນພືດ ແລະ ສັດ

ລັດຖະມົນຕີຊ່ວຍວ່າການ



*<u>ເອກະສານຊ້ອນທ້າຍ</u>*

## ບັນຊີ ລາຍຊື່ ສັດຕູພືດ ທີ່ມີຄວາມສ່ຽງຕໍ່ ສປ ຈີນ

1、干果露尾甲 *Carpophilus hemipterus*

2、锈赤扁谷盗 *Cryptolestes ferrugineus*

3、微扁谷盗 *Cryptolestes pusilloides*

4、高粱紫斑病 *Cercospora sorghi*

5、霜霉病菌（非中国种）*Peronosclerospora sp* (non-chinese species)

6、刺蒺藜草 *Cenchrus echinatus*

7、飞机草 *Chromolaena odorata*